**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ: 482 ຫກ

ນະຄອນຫຼວງວຽງຈັນ,ວັນທີ:..27..ກັນຍາ.......2023

# ໜັງສືແຈ້ງເຊີນປະມູນ

**ເຖິງ: ບໍລິສັດລົດເຊົ່າ ແລະ ບໍລິສັດທ່ອງທ່ຽວ ຢູ່ ສປປ ລາວ**

**ເລື່ອງ: ປະມູນການເຊົ່າລົດຕູ້ ແລະ ລົດເມ ເພື່ອຮັບໃຊ້ໃນກອງປະຊຸມເຈົ້າໜ້າທີ່ອາວຸໂສ ວັດທະນະທໍາ ແລະ ສິລະປະອາຊຽນ ຄັ້ງທີ 19 ແລະ ກອງປະຊຸມປິ່ນອ້ອມ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ສະບັບເລກທີ 857/ຖວທ, ລົງວັນທີ 26 ກັນຍາ 2023;
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ການຈັດຊື້ ແລະ ປະມູນ ສະບັບເລກທີ 892/ຖວທ, ລົງວັນທີ 27 ກັນຍາ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາລວມ ແລະ ອະນຸກໍາມະການເພື່ອຮັບຜິດຊອບຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສວັດທະນະທໍາ ແລະ ສິລະປະອາຊຽນ ຄັ້ງທີ 19 ແລະ ກອງປະຊຸມປິ່ນອ້ອມ, ໃນລະຫວ່າງວັນທີ 23-27 ຕຸລາ 2023 ທີ່ ເມືອງວັງວຽງ, ແຂວງ ວຽງຈັນ, ສະບັບເລກທີ 313/ຖວທ, ລົງວັນທີ 19 ເມສາ 2023

1. ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານເຄື່ອນໄຫວວຽກງານອາຊຽນຂອງລັດຖະບານເພື່ອຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສວັດທະນະທໍາ ແລະ ສິລະປະອາຊຽນ ຄັ້ງທີ 19 ແລະ ກອງປະຊຸມປິ່ນອ້ອມ, ໃນລະຫວ່າງວັນທີ 21-28 ຕຸລາ 2023 ທີ່ ເມືອງວັງວຽງ, ແຂວງ ວຽງຈັນ;
2. ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຂໍເຊີນບັນດາບໍລິສັດລົດເຊົ່າ, ບໍລິສັດທ່ອງທ່ຽວ ສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນເຊົ່າລົດຕູ້ ແລະ ລົດເມ ເພື່ອຮັບໃຊ້ໃນກອງປະຊຸມເຈົ້າໜ້າທີ່ອາວຸໂສວັດທະນະທໍາ ແລະ ສິລະປະອາຊຽນ ຄັ້ງທີ 19 ແລະ ກອງປະຊຸມປິ່ນອ້ອມ, ໃນລະຫວ່າງວັນທີ 21-28 ຕຸລາ 2023 ທີ່ ເມືອງວັງວຽງ, ແຂວງ ວຽງຈັນ, ສໍາລັບການຊໍາລະແມ່ນປະຕິບັດຕາມລະບຽບການຂອງກະຊວງການເງິນ;
3. ໃນການປະມູນແມ່ນຈະດໍາເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ທາງດ້ານການເຊົ່າລົດ, ການທ່ອງທ່ຽວ ແລະ ອື່ນໆທີ່ກ່ຽວຂ້ອງ, ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍທີ່ພົວພັນກັບການບໍລິການໃຫ້ເຊົ່າລົດໃນຂອບເຂດທົ່ວປະເທດ;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາບັນຊີແບບຄົບຊຸດປະຈຳປີ 2022 ອອກໂດຍກົມສ່ວຍສາອາກອນ 2023 ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 6 ເດືອນຜ່ານມາ (ບັນຊີສຳຮອງບໍ່ໃຫ້ກາຍ 2 ອາທິດກ່ອນມື້ເປີດຊອງປະມູນ);
6. ບໍລິສັດ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ທີ່ ຄະນະຮັບຜິດຊອບການປະມູນ ທີ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສອບຖາມຂໍ້ມູນໂທ: 021 212408; 020 5975 4545 ນາງ ຄານອານົງ ວົງມາຈຽງ, ການຂາຍຊອງປະມູນແມ່ນເລີ່ມແຕ່ວັນທີ 27/09/-11/10/2023, (ຕາມໂມງລັດຖະການ), ໃນລາຄາ 300,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 11/10/2023 ທີ່ຫ້ອງປະຊຸມຊັ້ນ 1 ຂອງຕຶກຖະແຫຼງຂ່າວ , ວັດທະນະທາ ແລະ ທ່ອງທ່ຽວ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກາມົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການຮັບຊອງ, ທຸກຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນທີ 11/10/2023 ທີ່ຫ້ອງປະຊຸມຊັ້ນ 1 ຂອງຕຶກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

**ຫົວໜ້າຫ້ອງການ**

ບົວໄລ ພານຸວົງ